ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

------- 0000000-------

ກະຊວງອຸດສາຫະກຳ ແລະ ການຄ້າ

ເລກທີ 1868 /ອຄ.ຄພນ

ນະຄອນຫຼວງວຽງຈັນ, ວັນທີ 04 SEP 2012

# ຂໍ້ຕົກລົງ

## ວ່າດ້ວຍມາດຕະການຄວບຄຸມການນຳເຂົ້າ, ການຜະລິດ, ຈຳໜ່າຍຜະລິດຕະພັນຢາສູບ ແລະ ຜະລິດຕະພັນທີ່ຄ້າຍຄືຜະລິດຕະພັນຢາສູບ ຢູ່ ສປປ ລາວ

- ອີງຕາມກົດໝາຍວ່າດ້ວຍວິສາຫະກິດ ສະບັບເລກທີ 11/ສພຊ, ລົງວັນທີ 9/11/2005.
- ອີງຕາມດຳລັດວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງກະຊວງອຸດສາຫະກຳ ແລະ ການຄ້າ ສະບັບເລກທີ 522/ນຍ, ລົງວັນທີ 23/12/2011.
- ອີງຕາມດຳລັດຂອງນາຍົກລັດຖະມົນຕີ ສະບັບເລກທີ 370/ສນຍ, ລົງວັນທີ 23/8/2010 ວ່າດ້ວຍການພິມຄຳເຕືອນກ່ຽວກັບສຸຂະພາບໃສ່ວັດຖຸຫຸ້ມຫໍ່ຜະລິດຕະພັນຢາສູບ.
- ອີງຕາມດຳລັດ ສະບັບເລກທີ 369/ນຍ, ລົງວັນທີ 23/8/2010 ວ່າດ້ວຍການຫ້າມໂຄສະນາສົ່ງເສີມການບໍລິໂພກຜະລິດຕະພັນຢາສູບ ແລະ ເປັນການປົກປ້ອງຜູ້ຊົມໃຊ້.

ເພື່ອໃຫ້ສອດຄ່ອງກັບທິດທາງນະໂຍບາຍຂອງພັກ-ລັດຖະບານວາງອອກ, ປະຕິບັດຕາມລະບຽບຫຼັກການ ແລະ ມາດຕະການທີ່ວາງອອກໃຫ້ເໝາະສົມໃນແຕ່ລະໄລຍະ, ປົກປ້ອງ-ສົ່ງເສີມສິດ ແລະ ຜົນປະໂຫຍດຂອງການຜະລິດພາຍໃນໃຫ້ເຂັ້ມແຂງ ແລະ ເຕີບໃຫ່ຍຂະຫຍາຍຕົວຂຶ້ນເລື້ອຍໆ, ພ້ອມທັງເປັນການຊຸກຍູ້ຫົວໜ່ວຍທຸລະກິດຢາສູບຕ່າງໆ ໃຫ້ດຳເນີນທຸລະກິດຂອງຕົນດ້ວຍຄວາມສະເໝີພາບ ຕໍ່ໜ້າກົດໝາຍແນໃສ່ສົ່ງເສີມແຂ່ງຂັນການຄ້າທີ່ເປັນທຳ ທັງເປັນການປົກປ້ອງສິດຜົນປະໂຫຍດອັນຊອບທຳຂອງຜູ້ຊົມໃຊ້.

**ລັດຖະມົນຕີວ່າການກະຊວງອຸດສາຫະກຳ ແລະ ການຄ້າ ອອກຂໍ້ຕົກລົງ :**

**ມາດຕາ 1.** ຫົວໜ່ວຍທຸລະກິດທີ່ດຳເນີນທຸລະກິດ ຢູ່ ພາຍໃນ ສປປ ລາວ, ຕ້ອງມີທະບຽນວິສາຫະກິດຢ່າງຖືກຕ້ອງຈິ່ງສາມາດນຳເຂົ້າສິນຄ້າຕາມໝວດສິນຄ້າໂດຍສະເພາະຜະລິດຕະພັນຢາສູບທີ່ຕົນໄດ້ຂຶ້ນທະບຽນໄວ້ແລ້ວ.

Scanned by CamScanner

**ມາດຕາ 2.** ໂຮງງານຜະລິດຢາສູບຢູ່ພາຍໃນ ສປປ ລາວ ທີ່ມີຈຸດປະສົງຜະລິດຢາສູບ ເພື່ອຈຳໜ່າຍຢູ່ພາຍໃນ ແລະ ຢາສູບທຸກຊະນິດທີ່ນຳເຂົ້າມາຈາກຕ່າງປະເທດເພື່ອຈຳໜ່າຍຢູ່ພາຍໃນ ສປປ ລາວ, ນອກຈາກເສຍພັນທະຕ່າງໆ ໃຫ້ລັດຕາມລະບຽບການຂອງກະຊວງການເງິນວາງອອກແລ້ວ, ຕ້ອງໃຫ້ພິມຄຳເຕືອນກ່ຽວກັບສຸຂະພາບດ້ວຍຂໍ້ຄວາມຕົວໜັງສືເປັນພາສາລາວ ແລະ ເປັນພາສາອັງກິດໃສ່ຊອງ ແລະ ຕຸດຢາສູບຕາມການກຳນົດຂອງກະຊວງສາທາລະນະສຸກ ແລະ ຕາມມາດຖານເງື່ອນຂອງດຳລັດວ່າດ້ວຍການພິມຄຳເຕືອນກ່ຽວກັບສຸຂະພາບໃສ່ວັດຖຸຫຸ້ມຫໍ່ຜະລິດຕະພັນຢາສູບ. ການພິມຄຳເຕືອນແມ່ນໃຫ້ປະຕິບັດຕາມມາດຕາ 7, 8, 9 ແລະ 10 ຂອງດຳລັດເລກທີ 370/ສນຍ, ລົງວັນທີ 23/8/2010 ວ່າດ້ວຍການພິມຄຳເຕືອນກ່ຽວກັບສຸຂະພາບໃສ່ວັດຖຸຫຸ້ມຫໍ່ຜະລິດຕະພັນຢາສູບ.

**ມາດຕາ 3.** ບຸກຄົນ ຫຼື ນິຕິບຸກຄົນທີ່ໄດ້ຮັບອະນຸຍາດນຳເຂົ້າຜະລິດຕະພັນຢາສູບເພື່ອມາຈຳໜ່າຍ ໃນ ສ ປປ ລາວ ຕ້ອງຮັບຜິດຊອບຕິດສະຫຼາກເປັນພາສາລາວໃສ່ຜະລິດຕະພັນຢາສູບຂອງຕົນ. ເນື້ອໃນຂອງສະຫຼາກທີ່ເປັນພາສາລາວຕ້ອງກົງກັບເນື້ອໃນສະຫຼາກທີ່ເປັນພາສາຕ່າງປະເທດ. ພ້ອມນີ້, ຜູ້ທີ່ໄດ້ຮັບອະນຸຍາດນຳເຂົ້າຕ້ອງຮັບຜິດຊອບຕໍ່ຄຸນນະພາບ, ມາດຕະຖານ ແລະ ຄວາມປອດໄພຂອງຂອງຜະລິດຕະພັນຢາສູບທີ່ຕົນນຳເຂົ້າມາຈຳໜ່າຍດ້ວຍ.

**ມາດຕາ 4.** ທຸກໆການຜະລິດ, ການນຳເຂົ້າ ແລະ ຈຳໜ່າຍຜະລິດຕະພັນຢາສູບທີ່ບໍ່ຖືກຕ້ອງຕາມທີ່ໄດ້ກຳນົດໄວ້ໃນຂໍ້ຕົກລົງສະບັບນີ້ ແລະ ລະບຽບກົດໝາຍທີ່ກ່ຽວຂ້ອງ, ລ້ວນແຕ່ເປັນຢາສູບນອກລະບົບ(ເຖື່ອນ) ແລະ ຈະຖືກດຳເນີນຄະດີຕາມລະບຽບກົດໝາຍແລ້ວແຕ່ກໍລະນີໜັກ ຫຼື ເບົາ.

**ມາດຕາ 5 .** ຫ້າມນຳເຂົ້າ ແລະ ຈຳໜ່າຍສິນຄ້າປະເພດເຂົ້າໜົມ, ເຄື່ອງຫຼິ້ນ ແລະ ອຸປະກອນຕ່າງໆ ຫຼື ສິນຄ້າປະເພດອື່ນໆ ທີ່ຮຽນແບບສີສັນໂດຍມີຮູບຊົງໂຄສະນາຜະລິດຕະພັນຢາສູບ ແລະ ມີລັກສະນະສົ່ງເສີມເດັກນ້ອຍ, ເຍົາວະຊົນ ແລະ ຊາວໜຸ່ມລາວໃຫ້ມີຄວາມຊິນເຄີຍກັບຢາສູບ, ມີແນວຄິດຢາກສູບຢາ ແລະ ຈະພາໃຫ້ເກີດການຕິດຢາສູບໃນອານາຄົດ.

**ມາດຕາ 6.** ຫ້າມໂຮງງານຜະລິດເຂົ້າໜົມ, ອາຫານ, ເຄື່ອງດື່ມ ແລະ ອື່ນໆອອກແບບ ຫຼື ຮູບຊົງຂອງຜະລິດຕະພັນໃນໂຮງງານຂອງຕົນຄ້າຍຄືຢາສູບເພື່ອຈຳໜ່າຍຢູ່ ສປປ ລາວ.

**ມາດຕາ 7.** ຫ້າມໂຮງງານຜະລິດຢາສູບ ຢູ່ ສປປ ລາວ, ບັນດາຫົວໜ່ວຍທຸລະກິດນຳເຂົ້າຢາສູບ ແລະ ທຸກພາກສ່ວນໂຄສະນາ ຫຼື ກະທຳການໃດໆ ທີ່ມີລັກສະນະຊັກຊວນ, ຈູງໃຈ ຊຶ່ງເປັນການສົ່ງເສີມໃຫ້ເກີດຄວາມສົນໃຈ ແລະ ບໍລິໂພກຢາສູບໃນທຸກຮູບແບບຕາມທີ່ໄດ້ກຳນົດໄວ້ໃນດຳລັດ ເລກທີ 369/ນຍ, ລົງວັນທີ 23/8/2010 ວ່າດ້ວຍການຫ້າມໂຄສະນາສົ່ງເສີມການບໍລິໂພກຜະລິດຕະພັນຢາສູບ.

**ມາດຕາ 8.** ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງໂຮງຈັກໂຮງງານທີ່ດຳເນີນທຸລະກິດນຳເຂົ້າ, ຜະລິດ, ຈຳໜ່າຍຜະລິດຕະພັນຢາສູບ ແລະ ຜະລິດພັນຄ້າຍຄືຜະລິດຕະພັນຢາສູບ ຢູ່ ສປປ ລາວ ທີ່ບໍ່ຖືກຕ້ອງຕາມຂໍ້ກຳນົດສະບັບນີ້ຈະຖືກປະຕິບັດມາດຕະການຕາມທີ່ໄດ້ກຳນົດໄວ້ໃນມາດຕາ 17 ຂອງດຳລັດ ເລກທີ 370/ສນຍ, ລົງວັນທີ 23/08/2010 ດັ່ງນີ້ :

- ຄັ້ງທີ 1 : ກ່າວເຕືອນ, ສຶກສາອົບຮົມໃຫ້ຂຽນໃບປະຕິຍານ.

Scanned by CamScanner

- ຄັ້ງທີ 2 : ຢຶດ ຫຼື ຮິບ ແລະ ປັບໃໝ 1 ເທົ່າຕົວຂອງມູນຄ່າຜະລິດຕະພັນດັ່ງກ່າວທີ່ຂາຍ ຫຼື ຈຳໜ່າຍຕາມທ້ອງຕະຫຼາດ ແລະ ສະຖານທີ່ຕ່າງໆ ໂດຍຄິດໄລ່ຕາມຈຳນວນຜະລິດຕະພັນຢາສູບທີ່ກວດພົບຕົວຈິງ ຫຼື ຕາມໃບນຳສົ່ງສິນຄ້າທີ່ທາງການຮັບຮູ້ພ້ອມທັງນຳຜະລິດຕະພັນໄປທຳລາຍຖິ້ມ.

- ຄັ້ງທີ 3 : ຢຶດ ຫຼື ຮິບ ແລະ ປັບໃໝ 3 ເທົ່າຕົວຂອງມູນຄ່າຜະລິດຕະພັນ ທີ່ກ່າວໄວ້ໃນຄັ້ງທີ່ 2 ເທິງນີ້ ພ້ອມທັງນຳຜະລິດຕະພັນໄປທຳລາຍຖິ້ມ.

- ຄັ້ງທີ 4 : ຢຶດ ຫຼື ຮິບ ແລະ ປັບໃໝ 5 ເທົ່າຕົວຂອງມູນຄ່າຜະລິດຕະພັນ ຕາມທີ່ໄດ້ກຳນົດໄວ້ໃນຄັ້ງທີ 2 ເທິງນີ້ ພ້ອມທັງນຳຜະລິດຕະພັນໄປທຳລາຍຖິ້ມ, ຖອນໃບອະນຸຍາດແບບຊົ່ວຄາວ ຫຼື ຖາວອນ ຕາມແຕ່ລະກໍລະນີ ໜັກ ຫຼື ເບົາ.

**ມາດຕາ 9.** ເງິນທີ່ໄດ້ຈາກການປັບໃໝພາຍຫຼັງທີ່ໄດ້ຫັກຄ່າສິ້ນເປືອງໃນການປະຕິບັດໜ້າທີ່ ແລະ ສິ້ນເປືອງໃນການຈັດທຳລາຍແມ່ນໃຫ້ມອບເຂົ້າງົບປະມານລັດ.

**ມາດຕາ 10.** ມອບໃຫ້ກົມອຸດສາຫະກຳ, ກົມການນຳເຂົ້າ-ສົ່ງອອກ, ກົມການຄ້າພາຍໃນ ແລະ ພະແນກອຸດສາຫະກຳ ແລະ ການຄ້າແຂວງ ແລະ ນະຄອນຫຼວງ ໃນທົ່ວປະເທດສົມທົບກັບພາກສ່ວນກ່ຽວຂ້ອງພ້ອມກັນຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ ຕາມພາລະບົດບາດຂອງໃຜລາວຢ່າງເຂັ້ມງວດ.

**ມາດຕາ 11.** ຂໍ້ຕົກລົງສະບັບນີ້ ມີຜົນສັກສິດນຳໃຊ້ນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ ແລະ ປ່ຽນແທນຂໍ້ກຳນົດເລກທີ 0388/ອຄ.ຄພນ, ລົງວັນທີ 14/3/2007 ວ່າດ້ວຍມາດຕະການຄວບຄຸມການຜະລິດ, ການນຳເຂົ້າ ແລະ ຈຳໜ່າຍ ຢາສູບ ຢູ່ ສປປ ລາວ ແລະ ບົດແນະນຳ ເລກທີ 1186/ຄພນ.ຈຄກ ລົງວັນທີ 05/10/2010 ກ່ຽວກັບການຈັດຕັ້ງປະຕິບັດຂໍ້ກຳນົດຂອງລັດຖະມົນຕີວ່າການກະຊວງອຸດສາຫະກຳ ແລະ ການຄ້າ ເລກທີ 0388/ອຄ.ຄພນ, ລົງວັນທີ14/3/2007.

ລັດຖະມົນຕີວ່າການ
ກະຊວງອຸດສາຫະກຳ ແລະ ການຄ້າ

ດຣ. ນາມ ວິຍະເກດ

Scanned by CamScanner